# ພຣະເຈົ້າຊົງມີຣິດເດດ

**ສັນລະເສີນ**—ຍ້ອງຍໍສັນລະເສີນໃນຄວາມເປັນພຣະເຈົ້າ, ໃນຄຸນລັກສະນະ, ໃນພຣະນາມ ຫຼື ໃນພຣະລັກສະນະຂອງພຣະອົງ. *ບໍ່ມີການຂໍໃນການອະທິຖານເທື່ອ.*

**ພຣະລັກສະນະ: ພຣະເຈົ້າຊົງມີຣິດເດດ** **Attribute: God Is Awesome**

**ຄວາມໝາຍ**: ຜູ້ຊົງສະແດງ/ສະທ້ອນເຖິງຄວາມໜ້າຍົກຍ້ອງຢຳເກງ; ຄວາມຍິ່ງໃຫຍ່, ສະຫງ່າງາມ, ດີເລີດ, ປະເສີດ, ໜ້າຕື່ນຕາຕື່ນໃຈ, ແລະ ໜ້າອັດສະຈັນໃຈແທ້.

**ຂໍ້ພະຄຳພີ**:

- **ອົບພະຍົບ 15:11** ຂ້າແດ່ອົງພຣະຜູ້ເປັນເຈົ້າ ໃນບັນດາພະທັງຫຼາຍນັ້ນ ໃຜແດ່ຄືພຣະອົງ? ໃຜຈະປຽບດັ່ງພຣະອົງ— ຜູ້ທ່ຽງແທ້ໃນຄວາມບໍລິສຸດ, ຜູ້ຍິ່ງໃຫຍ່ແລະມີກຽດຕິຍົດ, ທັງເຮັດການອັດສະຈັນຕ່າງໆໄດ້?
- **ໂຢບ 37:22** ຈາກທາງທິດເໜືອ ພຣະອົງສະເດັດມາດ້ວຍແສງສີທອງອັນເຈີດຈ້າ; ພຣະເຈົ້າສະເດັດມາດ້ວຍສະຫງ່າລາສີອັນເຕັມລົ້ນ.
- **ເພງສັນລະເສີນ 47:1-2** ຈົ່ງຕົບມືຢ່າງຊົມຊື່ນຍິນດີເຖີດ ຄົນທຸກຊາດພາສາເອີຍ; ຈົ່ງຮ້ອງສຽງດັງໆຖວາຍຄຳສັນລະເສີນແດ່ພຣະເຈົ້າ. ເພາະອົງພຣະຜູ້ເຈົ້າອົງສູງສຸດຊົງຣິດເດດຫຼາຍ, ພຣະອົງເປັນຈອມກະສັດທີ່ປົກຄອງທົ່ວທັງໂລກ.
- **ເພງສັນລະເສີນ 66:1-5** ປະຊາຊົນທົ່ວທັງໂລກເອີຍ, ຈົ່ງໂຮ່ຮ້ອງດ້ວຍຄວາມຊົມຊື່ນຍິນດີເຖີດ! ຈົ່ງຮ້ອງເພງຖວາຍກຽດແດ່ພຣະນາມຂອງພຣະອົງ; ໃຫ້ເປັນບົດເພງທີ່ລ້ຳເລີດທີ່ສຸດ. ຈົ່ງເວົ້າຕໍ່ພຣະເຈົ້າວ່າ "ສິ່ງທີ່ພະອົງກະທຳນັ້ນກໍໜ້າອັດສະຈັນທີ່ສຸດ! ຊົງຣິດທານຸພາບຍິ່ງໃຫຍ່ຈົນສັດຕູຫຼີກໜີໄປດ້ວຍຄວາມຢ້ານ. ທຸກສັບພະສິ່ງໃນໂລກກົ້ມກາບຕໍ່ພຣະອົງ; ພວກເຂົາຮ້ອງເພງສັນລະເສີນພຣະອົງ, ຄືຮ້ອງສັນລະເສີນພຣະນາມຂອງພຣະອົງ." ຈົ່ງມາເບິ່ງສິ່ງທີ່ພຣະເຈົ້າໄດ້ກະທຳ, ການອັດສະຈັນທີ່ຊົງກະທຳເພື່ອມະນຸດຊາດທັງຫຼາຍ!

**ການສາລະພາບບາບ**—ໃຫ້ສາລະພາບບາບຂອງເຈົ້າຢ່າງງຽບໆຕໍ່ພະເຈົ້າຜູ້ຊົງໃຫ້ອະໄພ.
ຖ້າເຮົາສາລະພາບຄວາມບາບຂອງພວກເຮົາ,ພຣະອົງຊົງສັດຊື່ແລະທ່ຽງທຳທີ່ຈະໃຫ້ອະໄພການບາບເຫຼົ່ານັ້ນ,ທັງຍັງສຳລະເຮົາໃຫ້ຂາວສະອາດຈາກການອະທຳທັງປວງ. 1 ໂຢຮັນ 1:9

**ການຂອບພະຄຸນ**—ໃຫ້ຂອບໃຈພະເຈົ້າສຳລັບສິ່ງທີ່ພະອົງໄດ້ຊົງກະທຳ. ບໍ່ມີການຮ້ອງຂໍໃນການອະທິຖານເທື່ອ.
ໃນທຸກໆສິ່ງຢ່າງ ຈົ່ງຂອບພະຄຸນ; ເພາະນີ້ຄືເຊິ່ງທີ່ພະເຈົ້າຕ້ອງການຈາກເຮົາທີ່ຢູ່ໃນພຣະເຢຊູຄຣິດເຈົ້າ. 1 ເທສະໂລນິກ 5:18

**ການເຂົ້າຫາພະເຈົ້າແທນຜູ້ອື່ນ**—ນີ້ເປັນການອະທິຖານຫາພະເຈົ້າແທນຜູ້ອື່ນຫຼືເພື່ອຄົນອື່ນ. ໃຫ້ຕັ້ງກຸ່ມອະທິຖານ 2-3 ຄົນ.

**ລູກຂອງພວກເຮົາ**—ແມ່ແຕ່ລະຄົນເລືອກລູກຄົນໜຶ່ງທີ່ຈະອະທິຖານເພື່ອ. ທຳອິດໃຫ້ອະທິຖານຕາມພະຄຳພີ ແລ້ວອະທິຖານຂໍສິ່ງທຕ້ອງການເພື່ອລູກຄົນນັ້ນ.

**ຂໍ້ພະຄຳພີ: ພຣະບັນຍັດສອງ 10:20-21**

**ຄຳອະທິຖານຕາມພະຄຳພີ**: ຂໍໃຫ້ (ຊື່ຂອງລູກ) ຢ້ານຢຳພຣະອົງ, ຜູ້ເປັນພຣະເຈົ້າຂອງພວກຂ້ານ້ອຍ, ໃຫ້ລາວໄດ້ຮັບໃຊ້ ແລະ ຍຶດໝັ້ນໃນພຣະອົງ. ຂ້ານ້ອຍອະທິຖານຂໍໃຫ້ພຣະອົງເທົ່ານັ້ນທີ່ (ຊື່ຂອງລູກ) ຍ້ອງຍໍສັນລະເສີນ. ຂໍໃຫ້ອົງພຣະຜູ້ເປັນເຈົ້າເປັນພຣະເຈົ້າຂອງລາວ. ພຣະບິດາເອີຍ, ຂໍເປີດຕາຝ່າຍຈິດວິນຍານຂອງ (ຊື່ຂອງລູກ) ເພື່ອລາວຈະເຫັນດ້ວຍຕາຂອງຕົນເອງເຖິງຄວາມຍິ່ງໃຫຍ່ແລະການອັດສະຈັນທີ່ພຣະອົງກະທຳເພື່ອຕົວລາວ.

**ຄຳຮ້ອງຂໍສະເພາະເຈາະຈົງ**:

**ຄູ ຫຼື ພະນັກງານ**—ໃຊ້ຂໍ້ພະຄຳພີຂ້າງລຸ່ມນີ້ ຫຼື ຂໍ້ພະຄຳສຳລັບລູກໆ ເພື່ອອະທິຖານເພື່ອຄູ/ພະນັກງານຄົນໃດໜຶ່ງ. ແລ້ວອະທິຖານຂໍສິ່ງສະເພາະເຈາະຈົງເພື່ອຄົນໆນັ້ນ.

- ຂໍພະເຈົ້າເປີດຕາ __________ ແລະ ປ່ຽນລາວໃຫ້ຫັນຈາກຄວາມມືດສູ່ແສງສະຫວ່າງ, ຈາກການຢູ່ໃຕ້ອຳນາດຂອງມານຊາຕານ ສູ່ການເພິ່ງພາລິດເດດຂອງພຣະຜູ້ເປັນເຈົ້າ, ເພື່ອລາວຈະໄດ້ຮັບການອະໄພບາບ ແລະ ກາຍເປັນໜຶ່ງໃນຜູ້ທີ່ຖືກຊ່ວຍໃຫ້ພົ້ນໂດຍຄວາມເຊື່ອໃນພຣະເຢຊູ. *ກິດຈະການ 26:18*

## ບັນຫາເລື່ອງໂຮງຮຽນ:

1. ອະທິຖານໃຫ້ມີການຟື້ນຟູຝ່າຍວິນຍານໃນໂຮງຮຽນ.
2. ອະທິຖານຂໍການປົກປ້ອງໃຫ້ແກ່ຄູອາຈານ ແລະ ນັກຮຽນທັງຫຼາຍ.
3. ອະທິຖານເພື່ອບັນຫາຕ່າງໆໃນໂຮງຮຽນ.

## ບັນດາແມ່ໆອະທິຖານເພື່ອ:

1. ອະທິຖານເພື່ອໂຮງຮຽນຕ່າງໆທົ່ວໂລກ, ແລະ ກຸ່ມຕ່າງໆໃຫ້ຕັ້ງໝັ້ນຄົງ.
2. ຂໍການປົກປ້ອງເພື່ອພັກລັດ ການຮັບໃຊ້ຕ່າງໆ ໃຫ້ມີຄວາມສັດຊື່ບໍລິສຸດ ແລະ ບໍ່ແຕກແຍກກັນ.

*ຈື່ໄວ້ວ່າ, ສິ່ງທີ່ອະທິຖານຢູ່ໃນກຸ່ມ ຄວນຈະຖືກເກັບໄວ້ໃນກຸ່ມເທົ່ານັ້ນ!*